# ແຈ້ງການຂໍ້ມູນເພີ່ມເຕີມ (NOAI) ກ່ຽວກັບສິດທິ ແລະ ຜົນປະໂຫຍດຂອງທ່ານ ກ່ຽວກັບໂຄງການ California Children’s Services (CCS)

## 1. ໂຄງການຈະປ່ຽນແປງແນວໃດ?

ກົດໝາຍໃໝ່ໃນ California ຈະປ່ຽນແປງວິທີທີ່ລູກຂອງທ່ານໄດ້ຮັບການບໍລິການໂຄງການ California Children's Services (CCS). ເລີ່ມແຕ່ວັນທີ **1 ມັງກອນ 2025** ເປັນຕົ້ນໄປ, Medi-Cal ຈະຂະຫຍາຍໂຄງການ WCM ໄປອີກ 12 ເຂດປົກຄອງຢູ່ໃນ California. ໃນ 12 ເຂດປົກຄອງເຫຼົ່ານັ້ນ, ແຜນປະກັນສຸຂະພາບ Medi-Cal ຈະເບິ່ງແຍງການປະສານງານການດູແລ, ການຄຸ້ມຄອງກໍລະນີ ແລະ California Children’s Services (CCS) ອື່ນໆ ສໍາລັບເດັກນ້ອຍຜູ້ທີ່ມີຄຸນສົມບັດສໍາລັບ CCS. ຕອນນີ້ ລູກຂອງທ່ານຈະໄດ້ຮັບ CCS ຜ່ານແຜນປະກັນສຸຂະພາບທາງການແພດຂອງພວກເຂົາຢູ່ໃນເຂດປົກຄອງຂອງພວກເຂົາ. ນີ້ເອີ້ນວ່າ: ໂຄງການ Whole Child Model (WCM).

ກ່ອນທີ່ຈະມີກົດໝາຍໃໝ່, ເດັກທີ່ມີເງື່ອນໄຂທີ່ມີສິດໄດ້ຮັບ CCS ຈະໄດ້ຮັບການດູແລຈາກທັງໂຄງການ CCS ໃນເຂດປົກຄອງ **ແລະ** ແຜນປະກັນສຸຂະພາບ Medi-Cal ໃນເຂດປົກຄອງທີ່ບໍ່ມີໂຄງການ WCM. ຕອນນີ້ ດ້ວຍໂຄງການ WCM, Medi-Cal ຈະປະສານງານການບໍລິການທັງໝົດຜ່ານແຜນປະກັນສຸຂະພາບ Medi-Cal ຂອງເດັກເທົ່ານັ້ນ.

ໃນຕອນນີ້ 33 ເຂດປົກຄອງຈະມີໂຄງການ WCM: Butte, Colusa, Del Norte, Glenn, Humboldt, Lake, Lassen, Marin, Mariposa, Mendocino, Merced, Modoc, Monterey, Napa, Nevada, Orange, Placer, Plumas, San Benito, San Luis Obispo, San Mateo, Santa Barbara, Santa Cruz, Shasta, Sierra, Siskiyou, Solano, Sonoma, Sutter, Tehama, Trinity, Yolo ແລະ Yuba.

## 2. ໂຄງການ WCM ແມ່ນຫຍັງ?

ໂຄງການ WCM ຊ່ວຍໃຫ້ເດັກນ້ອຍ CCS ທີ່ມີສິດໄດ້ຮັບ Medi-Cal ແລະ ຄອບຄົວຂອງພວກເຂົາໄດ້ຮັບການປະສານງານການດູແລ, ການເຂົ້າເຖິງການດູແລ ແລະ ຜົນໄດ້ຮັບດ້ານສຸຂະພາບທີ່ດີຂຶ້ນ.

## 3. ແຜນປະກັນສຸຂະພາບ Medi-Cal ຈະເຮັດວຽກກັບໂຄງການ WCM ແນວໃດ?

ຢູ່ໃນເຂດປົກຄອງ ຂອງ WCM, ແຜນປະກັນສຸຂະພາບ Medi-Cal ຈະປະສານງານ ແລະ ອະນຸມັດການດູແລສໍາລັບສະມາຊິກທີ່ມີເງື່ອນໄຂທີ່ມີສິດໄດ້ຮັບ CCS. ທ່ານໝໍ ແລະ ຜູ້ຊ່ຽວຊານທີ່ເປັນສ່ວນໜຶ່ງຂອງທີມງານຂອງແຜນປະກັນສຸຂະພາບ Medi-Cal ຈະໃຫ້ບໍລິການ CCS. ທ່ານໝໍ ແລະ ຜູ້ຊ່ຽວຊານເຫຼົ່ານີ້ແມ່ນຜູ້ໃຫ້ບໍລິການພາຍໃຕ້ໂຄງການ CCS ທີ່ມີຄຸນສົມບັດທີ່ຈະເຮັດວຽກກັບສະມາຊິກ CCS. ຖ້າຫາກວ່າສະມາຊິກຕ້ອງການການດູແລທີ່ບໍ່ມີຢູ່ໃນເຄືອຂ່າຍຂອງແຜນປະກັນສຸຂະພາບ Medi-Cal, ແຜນປະກັນສຸຂະພາບ Medi-Cal ຈະຊ່ວຍໃຫ້ສະມາຊິກ CCS ໄດ້ຮັບການດູແລທີ່ພວກເຂົາຕ້ອງການ.

## 4. ລູກຂອງຂ້າພະເຈົ້າສາມາດນໍາໃຊ້ຜູ້ໃຫ້ບໍລິການ CCS ດຽວກັນໄດ້ບໍ?

ລູກຂອງທ່ານອາດຈະສາມາດຮັບນໍາໃຊ້ຜູ້ໃຫ້ບໍລິການ CCS ຂອງພວກເຂົາໄດ້ ເຖິງແມ່ນວ່າຜູ້ໃຫ້ບໍລິການຢູ່ນອກເຄືອຂ່າຍຂອງແຜນປະກັນສຸຂະພາບ Medi-Cal ກໍ່ຕາມ. ຖາມຜູ້ໃຫ້ບໍລິການ CCS ຂອງລູກທ່ານວ່າ ພວກເຂົາເຮັດວຽກກັບແຜນສຸຂະພາບ Medi-Cal ຂອງລູກທ່ານ ຫຼື ບໍ່. ຖ້າຫາກວ່າ ຜູ້ໃຫ້ບໍລິການພາຍໃຕ້ CCS ເຮັດ, ລູກຂອງທ່ານສາມາດຮັກສາຜູ້ໃຫ້ບໍລິການດຽວກັນໄດ້. ຖ້າຫາກວ່າບໍ່ເຮັດ, ລູກຂອງທ່ານອາດຈະຍັງສາມາດຮັກສາຜູ້ໃຫ້ບໍລິການ CCS ດຽວກັນໄດ້ດົນເຖິງ 12 ເດືອນ ຫຼື ດົນກວ່ານັ້ນ. ຂະບວນການນີ້ເອີ້ນວ່າ: “ການດູແລຢ່າງຕໍ່ເນື່ອງ” (continuity of care). ທ່ານສາມາດຖາມແຜນປະກັນສຸຂະພາບ Medi-Cal ຂອງລູກທ່ານສໍາ

ລັບຂໍ້ມູນເພີ່ມເຕີມ. ລູກຂອງທ່ານອາດຈະສາມາດຮັບນຳໃຊ້ບໍລິການ CCS ໄວ້ໄດ້ ເຖິງແມ່ນວ່າຜູ້ໃຫ້ບໍລິການຢູ່ນອກເຄືອຂ່າຍ (OON) ກໍ່ຕາມ. ທ່ານສາມາດໂທຫາແຜນປະກັນສຸຂະພາບ Medi-Cal ຂອງລູກທ່ານ ແລະ ຂໍຮັກສາຜູ້ໃຫ້ບໍລິການ CCS ດຽວກັນຂອງລູກທ່ານ ຕາບໃດທີ່ຜູ້ໃຫ້ບໍລິການ CCS ແລະ ແຜນປະກັນສຸຂະພາບ Medi-Cal ຂອງລູກທ່ານສາມາດເຮັດວຽກຮ່ວມກັນໄດ້.

**5. ລູກຂອງຂ້າພະເຈົ້າສາມາດນຳໃຊ້ຜູ້ຈັດການກໍລະນີ CCS ດຽວກັນໄດ້ບໍ?**

ທ່ານອາດຈະສາມາດຮ້ອງຂໍ "ການດູແລຢ່າງຕໍ່ເນື່ອງ" ເພື່ອນຳໃຊ້ຜູ້ຈັດການກໍລະນີ CCS ຫຼື ພະຍາບານສາທາລະນະສຸກຂອງລູກທ່ານ. ຖ້າຫາກວ່າ ແຜນປະກັນສຸຂະພາບ Medi-Cal ແລະ ເຂດປົກຄອງບໍ່ສາມາດຕົກລົງກັນໄດ້, ລູກຂອງທ່ານຈະຖືກມອບໝາຍໃຫ້ຜູ້ຈັດການກໍລະນີຜ່ານແຜນປະກັນສຸຂະພາບ Medi-Cal ຂອງພວກເຂົາ.

**6. ລູກຂອງຂ້າພະເຈົ້າຈະຍັງຄົງຮັກສາຜົນປະໂຫຍດ CCS ດຽວກັນຢູ່ໃນໂຄງການ WCM ບໍ?**

ແມ່ນ. ລູກຂອງທ່ານຈະໄດ້ຮັບຜົນປະໂຫຍດ CCS ດຽວກັນຢູ່ໃນໂຄງການ WCM. ລູກຂອງທ່ານຈະຍັງຄົງໄດ້ຮັບການບໍລິການ CCS ທີ່ມີຄວາມຈຳເປັນທາງການແພດ ແລະ ອອກໃບສັ່ງແພດໂດຍຜູ້ໃຫ້ບໍລິການຂອງລູກທ່ານຕໍ່ໄປ.

**7. ຂ້າພະເຈົ້າຈະຮູ້ໄດ້ແນວໃດວ່າລູກຂອງຂ້າພະເຈົ້າຈະຢູ່ໃນໂຄງການ WCM?**

ລູກຂອງທ່ານຈະຢູ່ໃນໂຄງການ WCM ຖ້າຫາກວ່າ ລູກຂອງທ່ານໄດ້ລົງທະບຽນຢູ່ໃນແຜນປະກັນສຸຂະພາບ Medi-Cal ທີ່ຕັ້ງຢູ່ໃນໜຶ່ງໃນ 33 ເຂດປົກຄອງທີ່ລະບຸໄວ້ໃນຄຳຖາມທີ #1 ແລະ ມີສິດໄດ້ຮັບການບໍລິການ CCS.

**8. ໂຄງການ WCM ຈະປ່ຽນແປງຂະບວນການທີ່ຈະໄດ້ຮັບການດູແລ CCS ບໍ?**

ໂຄງການ WCM ຈະປະສານງານກິດຈະກຳການດູແລຂອງລູກທ່ານທັງໝົດ ແລະ ຈະແບ່ງປັນຂໍ້ມູນກັບຜູ້ໃຫ້ບໍລິການຂອງລູກທ່ານ. ສິ່ງນີ້ຮັບປະກັນວ່າລູກຂອງທ່ານໄດ້ຮັບການດູແລທັງໝົດຂອງພວກເຂົາ, ເຊິ່ງລວມທັງການບໍລິການ ແລະ ອຸປະກອນ CCS, ຈາກແຜນປະກັນສຸຂະພາບ Medi-Cal ຂອງລູກທ່ານ. ໂຄງການ WCM ຈະໃຫ້ລູກຂອງທ່ານເຂົ້າເຖິງການດູແລພິເສດ ໂດຍອີງໃສ່ເງື່ອນໄຂທີ່ມີສິດໄດ້ຮັບ CCS ຂອງພວກເຂົາ. WCM ຈະພະຍາຍາມນຳໃຊ້ຜູ້ໃຫ້ບໍລິການ CCS ດຽວກັນຂອງລູກທ່ານໄວ້.

**9. ຂ້ອຍສາມາດຮຽນຮູ້ເພີ່ມເຕີມ ຫຼື ຂໍຄວາມຊ່ວຍເຫຼືອໄດ້ຢູ່ໃສ?**

- ຖ້າຫາກວ່າ ທ່ານມີຄຳຖາມກ່ຽວກັບການບໍລິການ CCS ຂອງລູກທ່ານ ແລະ ໂຄງການ WCM, ກະລຸນາໂທຫາແຜນປະກັນສຸຂະພາບ Medi-Cal ຂອງລູກທ່ານ. ໝາຍເລກໂທລະສັບແມ່ນຢູ່ດ້ານຫຼັງຂອງບັດແຜນສຸຂະພາບ Medi-Cal ຂອງລູກທ່ານ. ການໂທແມ່ນຟຣີ.

- ນອກຈາກນີ້ ທ່ານຍັງສາມາດໂທຫາຫ້ອງການ CCS ໃນເຂດປົກຄອງເມືອງຂອງລູກທ່ານ ເພື່ອຖາມຄຳຖາມ. ເພື່ອຊອກຫາໝາຍເລກໂທລະສັບຂອງເຂດປົກຄອງເມືອງ, ໃຫ້ໄປຍັງ **www.dhcs.ca.gov/services/ccs/Pages/CountyOffices.aspx**.

- ເພື່ອສຶກສາເພີ່ມເຕີມກ່ຽວກັບຕົວເລືອກສຳລັບແຜນສຸຂະພາບ ແລະ ສະໜອງ (ທ່ານໝໍ ຫຼື ຄລີນິກ) ໂທຫາ Medi-Cal Health Care Options (HCO) ວັນຈັນ – ວັນສຸກ, ແຕ່ 8 ໂມງເຊົ້າ ຫາ 6 ໂມງແລງ, ທີ່ເບີ **1-800-430-4091** (TTY: 1-800-430-7077). ການໂທແມ່ນຟຣີ. ຫຼື ໄປ ທີ່ **www.healthcareoptions.dhcs.ca.gov**.

- ຖ້າຫາກວ່າ ທ່ານມີຄຳຖາມກ່ຽວກັບ Medi-Cal, ໃຫ້ໂທຫາສາຍຊ່ວຍເຫຼືອ Medi-Cal ຂອງ Department of Health Care Services (DHCS) ວັນຈັນ - ວັນສຸກ, ເວລາ 8 ໂມງເຊົ້າ ຫາ 5 ໂມງແລງ ທີ່ **1-800-541-5555**. ການໂທແມ່ນຟຣີ.

- ຖ້າທ່ານໄດ້ຮ້ອງຮຽນ ຫຼື ມີບັນຫາກັບ Medi-Cal,ໂທຫາຫ້ອງການ Medi-Cal Ombudsman ວັນຈັນ – ວັນສຸກ, ແຕ່ 8 ໂມງເຊົ້າ ຫາ 5 ໂມງແລງ, ທີ່ເບີ **1-888-452-8609** (TTY: 711 ສຳລັບ California State Relay). ການໂທແມ່ນຟຣີ. ຫຼື ອີເມວ **MMCDOmbudsmanOffice@dhcs.ca.gov**. ພວກເຂົາຊ່ວຍເຫຼືອຄົນທີ່ມີ Medi-Cal ໃຊ້ສິດທິປະໂຫຍດຂອງພວກເຂົາ ແລະ ຮູ້ຈັກສິດ ແລະ ຄວາມຮັບຜິດຊອບຂອງພວກເຂົາ.